**Food and Agriculture Organization of the United Nations**

# ການລົງທຶນຢ່າງມີຄວາມຮັບຜິດຊອບ ໃນດ້ານສະບຽງອາຫານ, ກະສິກໍາ ແລະ ປ່າໄມ້ ໃນ ສປປ ລາວ: ເປັນຫຍັງຈຶ່ງສໍາຄັນ.

ການພັດທະນາທາງດ້ານກະສິກໍາ ແລະ ຊົນນະບົດ ຖືວ່າເປັນສອງເຄື່ອງມືຫຼັກໃນການຕໍ່ສູ້ການລົບລ້າງການອຶດຫິວ ແລະ ການລົບລ້າງຄວາມທຸກຍາກແບບຍືນຍົງ ແລະ ຫຼຸດຜ່ອນຜົນກະທົບດ້ານລົບທາງດ້ານເສດຖະກິດ-ສັງຄົມ ທີ່ໄດ້ຮັບຜົນກະທົບຈາກໄພພິບັດ, ການປ່ຽນແປງສະພາບດິນຟ້າອາກາດ ແລະ ການແຕກຕື່ນຈາກການແຜ່ລະບາດພະຍາດຕ່າງໆ ໂດຍສະເພາະພະຍາດລະບາດໂຄວິດ-19.

ຂະແໜງ ການກະສິກໍາ (ລວມທັງປ່າໄມ້) ແມ່ນພື້ນຖານຫຼັກຂອງຍຸດທະສາດການພັດທະນາຂອງ ສປປ ລາວ ຊຶ່ງມັນໄດ້ກວມເອົາຂະແໜງແຮງງານ 70% ຂອງພົນລະເມືອງ.

ເຖິງຢ່າງໃດກໍ່ຕາມ, ຂະແໜງກະສິກໍາ ແມ່ນປະກອບສ່ວນພຽງແຕ່ 16% GDP ຂອງປະເທດ, ເນື່ອງຈາກມີຫຼາຍປັດໃຈ ລວມທັງຜົນຜະລິດທີ່ຕໍ່າ ແລະ ການຜະລິດທີ່ບໍ່ທັນສະໃໝ ທີ່ນອນຢູ່ໃນຫຼາຍໆບັນຫາ. ເພື່ອແກ້ໄຂບັນຫາຕ່າງໆນີ້, ການລົງທຶນທັງພາກລັດ ແລະ ເອກະຊົນ ແມ່ນມີຄວາມຈໍາເປັນເພື່ອຍົກສູງສະມັດຕະພາບ ຂອງການຜະລິດ ແລະ ລາຍຮັບທາງດ້ານກະສິກໍາ, ໂດຍສະເພາະໃນເຂດຊົນນະບົດ. ໃນ ສປປ ລາວ, ການລົງທຶນເພີ່ມເຕີມ 41 ລ້ານ ໂດລາສະຫາລັດ ຕໍ່ປີ ແມ່ນມີຄວາມຈໍາເປັນ ເພື່ອໃຫ້ບັນລຸເປົ້າໝາຍສອງອັນທໍາອິດຂອງ SDGs ໃນປີ 2030, ໃນນັ້ນ 34 ລ້ານ ໂດລາສະຫາລັດ ແມ່ນສຸມໃສ່ສະເພາະຂະແໜງກະສິກໍາ[1].

---

## ການລົງທຶນທີ່ດີແມ່ນຫຍັງ?

ການລົງທຶນທີ່ມີຄວາມຮັບຜິດຊອບ ໃນລະບົບກະສິກໍາ ແລະ ສະບຽງອາຫານ ທີ່ປະກອບສ່ວນເຂົ້າໃນການພັດທະນາແບບຍືນຍົງ, ເພື່ອຄວາມໝັ້ນຄົງທາງດ້ານສະບຽງອາຫານ ແລະ ໂພສະນາການ, ສົ່ງເສີມຜົນຜະລິດໃຫ້ເພີ່ມຂຶ້ນ, ຍືນຍົງຂຶ້ນ ແລະ ມີສ່ວນຮ່ວມໃນລະບົບສະບຽງອາຫານ ແລະ ການນັບຖືສິດທິມະນຸດ.

---

ໃນເວລາດຽວກັນ, ມັນເປັນສິ່ງສໍາຄັນທີ່ຕ້ອງເຂົ້າໃຈວ່າ ບໍ່ແມ່ນການລົງທຶນທຸກປະເພດທີ່ສາມາດປະກອບສ່ວນເພື່ອບັນລຸເປົ້າໝາຍເຫຼົ່ານີ້.

ການລົງທຶນບາງຢ່າງກ່ຽວຂ້ອງກັບການກໍ່ໃຫ້ເກີດຄວາມສ່ຽງສູງຕໍ່ກັບຜູ້ກ່ຽວຂ້ອງ, ເຊັ່ນວ່າການລະເມີດສິດຄອບຄອງການນໍາໃຊ້ທີ່ດິນທີ່ຖືກຕ້ອງຕາມກົດໝາຍ, ການລ່ວງລະເມີດສິດທິແຮງງານ, ຫຼື ກໍ່ໃຫ້ເກີດຄວາມເສຍຫາຍຕໍ່ສິ່ງແວດລ້ອມ, ສຸຂະພາບ ແລະ ຄວາມປອດໄພໃນການເຮັດວຽກງານ.

## ຜົນກະທົບ ຂອງການແຜ່ລະບາດພະຍາດ ໂຄວິດ-19 ຕໍ່ກັບຂະແໜງກະສິກໍາ ໃນ ສປປ ລາວ; ເປັນເຫດຜົນຫຼາຍຢ່າງໃນການລົງທຶນຢ່າງມີຄວາມຮັບຜິດ ຊອບ.

ໃນ ສປປ ລາວ, ຜົນກະທົບຂອງການແຜ່ລະບາດຂອພະຍາດຕໍ່ກັບສຸ ຂະພາບສາທາລະນະສຸກແມ່ນບໍ່ຫຼາຍ ແລະຢູ່ໃນວົງຈໍາກັດ . ເຖິງຢ່າງໃດກໍ່ຕາມ, ສປປ ລາວ ກໍ່ບໍ່ສາມາດຫລີກລຽງຈາກຜົນກະທົບທາງດ້ານເສດຖະກິດ-ສັງຄົມ ຍ້ອນວ່າຕ່ອງໂສ້ການສະໜອງ ພາຍໃນ ແລະ ພາກພື້ນ ພັງທະລາຍລົງ, ພ້ອມທັງດ້ານລາຍຮັບຂອງຄົວເຮືອນ ແລະ ຄວາມຕ້ອງການຂອງຜູ້ບໍລິໂພກ[1]. ຂະແໜງອຸດສາຫະກໍາທ່ອງທ່ຽວ ແລະ ການບໍລິການອື່ນໆ ແມ່ນໄດ້ຮັບຜົນກະທົບທີ່ສຸດ, ມີການສູນເສຍທາງດ້ານເສດຖະກິດສູງ, ການເພີ່ມຂຶ້ນຂອງອັດຕາຫວ່າງງານ (ເພີ່ມຈາກລະດັບສະເລ່ຍ 2% ເຖິງ 25%), ແລະ ການຄາດຄະເນການຂະຫຍາຍຕົວຂອງເສດຖະກິດທີ່ຫຼຸດລົງໃນປີ 2020[1]. ສິ່ງນີ້ອາດຈະເຮັດໃຫ້ປະຊາຊົນ 214 000 ຄົນຫຼຸດລົງ ຫຼື ກັບຄືນສູ່ຄວາມທຸກຍາກອີກ, ຊຶ່ງເປັນສິ່ງທີ່ທ້າທາຍຕໍ່ກັບການບັນລຸເປົ້າໝາຍ ທີ 1 SDG (ຫຼຸດພົ້ນຈາກຄວາມທຸກຍາກໃນທຸກຮູບແບບທີ່ມີຢູ່ທຸກບ່ອນ) ແລະ ທີ 2 (ການລົບລ້າງຄວາມອຶດຢາກເທົ່າສູນ).

ຂະແໜງ ກະສິກໍາ ໄດ້ປະສົບກັບຄວາມຫຍຸ້ງຍາກຈາກໄພນໍ້າຖ້ວມ ແລະ ໄພແຫ້ງແລ້ງ ກ່ອນການລະບາດຂອງພະຍາດໂຄວິດ. ສະນັ້ນ, ມັນມີຄວາມສ່ຽງສູງ, ມີຜົນກະທົບທາງລົບຕໍ່ຄວາມໝັ້ນຄົງດ້ານສະບຽງອາຫານ ແລະ ໂພສະນາການ, ຊີວິດການເປັນຢູ່, ການເປັນໜີ້ສິນ ແລະລາຍໄດ້ຫຼຸດລົງ. ກຸ່ມທີ່ມີຄວາມສ່ຽງເຊັ່ນ: ເດັກນ້ອຍ ແລະ ໄວໜຸ່ມ, ຜູ້ທຸກຍາກ, ຊາວກະສິກອນຫາລ້ຽງຊີບ, ແລະ ແມ່ຍິງ ແມ່ນມີຄວາມສ່ຽງສູງ.

ຕົວຢ່າງ, ຜົນກະທົບທີ່ເປັນທາງລົບ ທີ່ບໍ່ພຽງແຕ່ກະທົບໃສ່ ແຫຼ່ງນ້ຳ ແລະ ພື້ນດິນ, ແຕ່ຍັງສົ່ງຜົນກະທົບຕໍ່ກັບ ສຸຂະພາບຂອງມະນຸດ,

ເຊິ່ງເປັນຜົນມາຈາກການໃຊ້ສານເຄມີ ທີ່ບໍ່ມີຄວາມຍືນຍົງ ແລະ ຜິດກົດໝາຍ ໃນການຂະບວນການຜະລິດກ້ວຍ ແລະ ສິນຄ້າກະສິກຳສົ່ງອອກອື່ນໆ ໃນສປປລາວ ທີ່ເປັນບັນຫາທີ່ຕ້ອງໄດ້ເອົາໃຈໃສ່ໃນທົ່ວປະເທດນະເວລາປະຈຸບັນນີ້, ທີ່ເປັນຜົນໃຫ້ມີການອອກໃຈແຈ້ງການຂອງ ນາຍຍົກລັດຖະມົນຕີ ທີ່ມີຈຸດປະສົງເພື່ອຫຼຸດຜ່ອນຜົນກະທົບດັ່ງກ່າວນີ້.

ເພື່ອສ້າງຜົນປະໂຫຍດທີ່ຍືນຍົງ ສຳລັບທຸກຄົນ, ມັນເປັນສິ່ງສຳຄັນທີ່ຈະຮັບປະກັນວ່າ ບໍ່ພຽງແຕ່ໃຫ້ມີການລົງທືນທີ່ມີຈຳນວນຫຼາຍເທົ່ານັ້ນແຕ່ຍັງຕ້ອງມີການລົງທຶນທີ່ດີກວ່າເກົ່າ. ມັນມີຄວາມສຳຄັນທີ່ສຸດໃນການເສີມຂະຫຍາຍ ແລະ ສົ່ງເສີມການລົງທຶນທີ່ມີຄວາມຮັບຜິດຊອບ.

## ບົດແນະນຳອາຊຽນ ກ່ຽວກັບການລົງທຶນ ໃນສະບຽງອາຫານ, ການກະສິກຳ, ແລະ ການລ້ຽງສັດ.

ໃນເດືອນກັນຍາ 2017, ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ອາຊຽນ (AMAF) ໄດ້ຕົກລົງພັດທະນາ ບົດແນະນຳອາຊຽນວ່າດ້ວຍການສົ່ງເສີມການລົງທຶນ ຢ່າງມີຄວາມຮັບຜິດຊອບໃນລະບົບສະບຽງອາຫານ, ກະສິກຳ ແລະ ປ່າໄມ້ (ຕໍ່ໄປນີ້ເອີ້ນວ່າ “ບົດແນະນຳ”). ບົດ ແນະນຳສະບັບນີ້ ແມ່ນມີຂໍ້ມູນພື້ນຖານ ຈາກບົດແນະນຳ ສຳລັບການລົງທຶນທີ່ມີຄວາມຮັບຜິດຊອບໃນລະບົບກະສິກຳ ແລະ ອາຫານ ຂອງຄະນະກຳມະການ ຄວາມໝັ້ນຄົງດ້ານສະບຽງອາຫານໂລກ (CFS RAI)[2] ແລະ ສະທ້ອນໃຫ້ເຫັນເຖິງລັກສະນະສະເພາະ ແລະ ສະພາບການຕົວຈິງຂອງປະເທດສະມາຊິກອາຊຽນ. ບົດແນະນຳ ASEAN-RAI ແມ່ນໄດ້ຖືກຮັບຮອງເອົາໂດຍ ກອງປະຊຸມ ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ອາຊຽນ (AMAF) ໃນເດືອນຕຸລາ ປີ 2018.




https://www.aseanraiguidelines.org/resources

ຈຸດປະສົງຫຼັກຂອງບົດແນະນຳ ແມ່ນເພື່ອສົ່ງເສີມການລົງທຶນຂະແໜງ ອາຫານ, ກະສິກຳ - ລວມທັງການປະມົງ ແລະ ປ່າໄມ້ - ໃນພາກພື້ນອາຊຽນ ທີ່ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດພາກພື້ນ, ຄວາມໝັ້ນຄົງດ້ານສະບຽງອາຫານ ແລະ ໂພຊະນາການ, ຮັບປະກັນສະບຽງອາຫານ ແລະ ຜົນປະໂຫຍດທີ່ເທົ່າທຽມກັນ, ພ້ອມທັງການນຳໃຊ້ ຊັບພະຍາກອນທຳມະຊາດຢ່າງຍືນຍົງ. ບົດແນະນຳດັ່ງກ່າວຖືວ່າເປັນຫຼັກການທີ່ຈັດຕັ້ງປະຕິບັດທີ່ດີລະດັບສາກົນ ເພື່ອຮັບປະກັນວ່າການລົງທຶນດ້ານກະສິກຳ ຂະໜາດໃຫຍ່ ແມ່ນການພັດທະນາທາງດ້ານສັງຄົມ, ເສດຖະກິດ, ແລະ ສິ່ງແວດລ້ອມ ຢ່າງຍືນຍົງ ແລະ ມີສ່ວນຮ່ວມ. ຫຼັກການເຫຼົ່ານີ້ແມ່ນເຄື່ອງມືຄູ່ຮ່ວມການລົງທຶນທີ່ດີ - ສຳລັບພາກລັດ, ເອກະຊົນ ແລະ ສັງຄົມພົນລະເຮືອນ - ເປັນແນວທາງອົງປະກອບສຳຄັນຂອງການລົງທຶນໃນອະນາຄົດ. ບົດແນະນຳດັ່ງກ່າວ ມີເປົ້າໝາຍເພື່ອເປັນພື້ນຖານຂອງການລົງທທຶນດ້ານກະສິກຳຕ່າງໆໃນທົ່ວພາກພື້ນ.

https://www.aseanraiguidelines.org/

## ທາງອົງການ FAO ໄດ້ໃຫ້ການສະໜັບສະໜູນແນວໃດຕໍ່ກັບ ການລົງທຶນຢ່າງມີຄວາມຮັບຜິດຊອບ ໃນດ້ານລະບົບການກະສິກຳ ແລະ ສະບຽງອາຫານ ໃນ ສປປ ລາວ?

ພາຍໃຕ້ກອບແຜນງານຂອງອົງການອາຫານ ແລະ ການກະເສດ ປະຈຳ ສປປ ລາວ (FAO) ກ່ຽວກັບ “ການສະໜັບສະໜູນການລົງທຶນຢ່າງມີຄວາມຮັບຜິດຊອບ ໃນດ້ານລະບົບກະສິກຳ ແລະ ສະບຽງອາຫານ”, ທາງອົງການ FAO ໃຫ້ການສະໜັບສະໜູນແບບສະເພາະ ຕໍ່ກັບລັດຖະບານ ແຫ່ງ ສປປ ລາວ ເພື່ອປັບປຸງການລົງທຶນຢ່າງມີຄວາມຮັບຜິດຊອບໃນລະບົບກະສິກຳ ແລະ ສະບຽງອາຫານ. ອົງການ FAO ສ້າງຄວາມຮັບຮູ້ກ່ຽວກັບບົດແນະນຳອາຊຽນ ແລະ ຫຼັກການຂອງ CFS RAI ໃນບັນດາພາກສ່ວນທີ່ມີສ່ວນຮ່ວມ ແລະ ພ້ອມທັງເຮັດວຽກຮ່ວມກັບລັດຖະບານ ເພື່ອປັບປຸງສະພາບນະໂຍບາຍ, ກົດໝາຍ, ລະບຽບການ ແລະ ສະຖາບັນ ໃຫ້ດີຂຶ້ນໃນລະດັບຊາດ.

ເອກະສານອ້າງອີງ ສາມາດເບິ່ງໄດ້ທີ່:


[1] **FAO, IFAD & WFP. 2015.** *Achieving Zero Hunger: the critical role of investments in social protection and agriculture.* Rome. http://www.fao.org/3/a-i4951e.pdf

[2] **Committee on World Food Security.** 2014. *Principles for Responsible Investment in Agriculture and Food Systems.* Rome. http://www.fao.org/cfs/home/activities/rai/en/



ໂດຍການໃຫ້ທຶນສະໜັບສະໜູນໂດຍ: Federal Ministry of Food and Agriculture



© FAO, 2020
CB1776LO/1/11.20